ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ — ເລກທີ: 2525 /ຍທຂ
ນະຄອນຫຼວງວຽງຈັນ, ວັນທີ: 30 ມິຖຸນາ 2023

# ຄຳແນະນຳ
# ກ່ຽວກັບການຄຸ້ມຄອງການຂົນສົ່ງສິນຄ້າ, ຕູ້ສິນຄ້າ ແລະ ເອກະສານ ຂົນສົ່ງສິນຄ້າດ້ວຍລະບົບຄຸ້ມຄອງການຂົນສົ່ງຂ້າມແດນ ເອເລັກໂຕຣນິກ (Cross Border Transport Management "CBTM")

- ອີງຕາມ ກົດໝາຍ ວ່າດ້ວຍການຂົນສົ່ງຫຼາຍຮູບແບບ ສະບັບເລກທີ 28/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 677/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 710/ຫສນຍ, ລົງວັນທີ 23 ພຶດສະພາ 2022.

## ລັດຖະມົນຕີ ອອກຄຳແນະນຳ:

### 1. ຈຸດປະສົງ

ຄຳແນະນຳສະບັບນີ້ ກຳນົດ ຫຼັກການ, ວິທີການ ໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາການຂົນສົ່ງສິນຄ້າ, ຕູ້ສິນຄ້າ ແລະ ພາຫະນະຂົນສົ່ງສິນຄ້າຜ່ານດ່ານສາກົນທາງບົກ, ທາງນໍ້າ, ທາງລົດໄຟ ແລະ ທາງອາກາດ ດ້ວຍການໃຊ້ລະບົບ CBTM ໃຫ້ມີຄວາມສະດວກ, ວ່ອງໄວ, ສອດຄ່ອງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ໂດຍການບັນທຶກ, ເກັບຮັກສາ ແລະ ລາຍງານ ຂໍ້ມູນການຂົນສົ່ງທາງລະບົບເອເລັກໂຕຣນິກ ຫຼື ພິມເອກະສານອອກຈາກລະບົບ.

### 2. ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຄຳແນະນຳສະບັບນີ້ ມີຄວາມໝາຍ ດັ່ງນີ້:

1) **ລະບົບ CBTM** ໝາຍເຖິງ ລະບົບ Web-Based Application ຂອງສະມາຄົມ LITFA ທີ່ມີຖານຂໍ້ມູນແບບລວມສູນ, ຊຶ່ງນຳໃຊ້ສຳລັບການບັນທຶກ ຂໍ້ມູນການເຂົ້າ-ອອກ, ເກັບຮັກສາ ສິນຄ້າ, ຕູ້ສິນຄ້າ ແລະ ເອກະສານຂົນສົ່ງສິນຄ້າດ້ວຍລະບົບເອເລັກໂຕຣນິກ, ຊຶ່ງສາມາດເຂົ້ານຳໃຊ້ໄດ້ ໂດຍຜ່ານໂທລະສັບມືຖື (Smart Phone), ຄອມພິວເຕີ, ອຸປະກອນແທບເລັດ ແລະ ອຸປະກອນເອເລັກໂຕຣນິກອື່ນໆ;
2) **ຄິວອາໂຄດ (Quick Response Code "QR Code") ຂອງ CBTM** ໝາຍເຖິງ ສັນຍາລັກເປັນຮູບສີ່ຫຼ່ຽມ ຫຼື ຮູບອື່ນໆ ຊຶ່ງນຳໃຊ້ໃນການເກັບກຳຂໍ້ມູນ ແລະ ຕິດຕາມກ່ຽວກັບສິນຄ້າ, ຕູ້ບັນຈຸສິນຄ້າ, ບ່ອນເກັບຮັກສາ ແລະ ຜູ້ຄໍ້າປະກັນຢູ່ ສປປ ລາວ;

3) **ອານາເຂດພາສີ** ໝາຍເຖິງ ພື້ນແຜ່ນດິນອັນຄົບຖ້ວນຂອງ ສປປ ລາວ ທີ່ໄດ້ກຳນົດຂອບເຂດການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ພາສີ. ເຈົ້າໜ້າທີ່ພາສີ ສາມາດປະຕິບັດໜ້າທີ່ຂອງຕົນນອກອານາເຂດພາສີ ຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ;

4) **ການເຄື່ອນໄຫວໃນວົງລັດສະໝີພາສີ** ໝາຍເຖິງ ການເຄື່ອນໄຫວ ໃນຂອບເຂດວົງລັດສະໝີ 30 ກິໂລແມັດ ຂອງດ່ານຊາຍແດນ ຫຼືຫ້ອງການ ພາສີ ທີ່ ເປັນ ບໍລິເວນສຳລັບການປະຕິບັດວຽກງານວິຊາສະເພາະໃນການຄວບຄຸມຕິດຕາມ, ກວດກາ ຂອງເຈົ້າໜ້າທີ່ພາສີ ແລະ ລັດຖະການພາສີ ແຕ່ລະຂັ້ນ;

5) **ແບບຟອມເອກະສານເອເລັກໂຕຣນິກ** ໝາຍເຖິງ ແບບຟອມຕ່າງໆທີ່ໄດ້ຖືກພັດທະນາ ແລະ ພິມອອກຈາກລະບົບ CBTM ພາຍຫຼັງທີ່ຜູ້ປະກອບການໄດ້ປ້ອນຂໍ້ມູນເຂົ້າໃນລະບົບ;

6) **ໃບຂົນສົ່ງລວມຂອງສິນຄ້າ (Cargo Manifest)** ໝາຍເຖິງ ບັນຊີສິນຄ້າທີ່ໄດ້ບັນທຸກມາທາງບົກ, ທາງນ້ຳ, ທາງລົດໄຟ ແລະ ທາງອາກາດ ຊຶ່ງມີສິນຄ້າ ຂາເຂົ້າ, ຂາອອກ ແລະ ຜ່ານແດນ;

7) **ໃບອະນຸຍາດຜ່ານຊົ່ວຄາວ ສຳລັບຕູ້ບັນຈຸສິນຄ້າແລະຕູ້ເປົ່າ Container Temporary Admission Document (ໃບ TAD)** ໝາຍເຖິງ ເອກະສານຕິດຕາມການເຂົ້າມາຂອງ ຕູ້ບັນຈຸສິນຄ້າ ແລະ ຕູ້ເປົ່າ ການເກັບຮັກສາ ແລະ ການນຳໃຊ້ຕູ້ບັນຈຸສິນຄ້າໂດຍຜູ້ປະກອບການຕ່າງໆໃນການເຄື່ອນໄຫວຂົນສົ່ງສິນຄ້າໃນອານາເຂດພາສີລາວ ດ້ວຍການບັນທຶກການເຄື່ອນໄຫວກິດຈະກຳຕ່າງໆຜ່ານຈຸດກວດກາແຕ່ລະໄລຍະຕັ້ງແຕ່ມື້ເຂົ້າ ຈົນຮອດມື້ອອກຈາກ ຊາຍແດນ ສປປ ລາວ;

8) **ໃບອະນຸຍາດຕິດຕາມການແລ່ນລົດບັນທຸກຂົນສົ່ງສິນຄ້າ (ໃບກຳກັບເສັ້ນທາງ/ໃບ TRB (Truck Routing Bill)** ໝາຍເຖິງ ເອກະສານໃຊ້ສຳລັບຕິດຕາມການແລ່ນລົດບັນທຸກຂົນສົ່ງສິນຄ້າຂອງຕ່າງປະເທດ ທີ່ໄດ້ຮັບອະນຸຍາດເຂົ້າມາສົ່ງສິນຄ້າ ຫຼື ຮັບສິນຄ້າຢູ່ພາຍໃນປະເທດ (ນອກເຂດດ່ານພາສີສາກົນ) ຊຶ່ງໃບ TRB ດັ່ງກ່າວຕ້ອງອອກໃນລະບົບ CBTM ແລະ ຖືກຮັບຮອງເປັນແຕ່ລະຖ້ຽວ, ສາມາດກວດສອບດ້ວຍເລກທີ ຫຼື QR Code ຜ່ານມືຖື;

9) **ໃບສັ່ງມອບເອກະສານ-ສິນຄ້າ Delivery Order (ໃບ DO, ອອກໃນລະບົບ CBTM)** ໝາຍເຖິງເອກະສານມອບສິດການແຈ້ງພາສີ ເພື່ອນຳສິນຄ້າອອກຈາກດ່ານພາສີສາກົນໃຫ້ແກ່ຜູ້ປະກອບການ ຫຼື ຕົວແທນທີ່ຖືກມອບໝາຍ;

10) **ຜູ້ປະກອບການ (Operator)** ໝາຍເຖິງ ຫົວໜ່ວຍທຸລະກິດໃນ ສປປ ລາວ ທີ່ລົງທະບຽນເປັນສະມາຊິກຂອງ ສະມາຄົມຜູ້ຂົນສົ່ງ ແລະ ຈັດສົ່ງສິນຄ້າລະຫວ່າງປະເທດ ສປປ ລາວ (LITFA) ເປັນຕົ້ນ ຜູ້ປະກອບການຂົນສົ່ງໂລຊິດສະຕິກ, ຈັດສົ່ງ, ລະບົບສາງ, ທ່າບົກ, ລານເກັບມ້ຽນຕູ້ສິນຄ້າ, ສະຖານີຂົນສົ່ງສິນຄ້າ, ຜູ້ບໍລິການແຈ້ງພາສີ ແລະ ຜູ້ປະກອບການນຳເຂົ້າ-ສົ່ງອອກ.

## 3. ເງື່ອນໄຂໃນການຈັດຕັ້ງປະຕິບັດຂັ້ນຕອນຄຸ້ມຄອງໃຫ້ລົດຂົນສົ່ງສິນຄ້າຕ່າງປະເທດ ຜ່ານເຂົ້າຊົ່ວຄາວໃນ ອານາເຂດພາສີລາວ

ການຈັດຕັ້ງປະຕິບັດຂັ້ນຕອນຄຸ້ມຄອງໃຫ້ລົດຂົນສົ່ງສິນຄ້າຕ່າງປະເທດ ຜ່ານເຂົ້າຊົ່ວຄາວໃນ ອານາເຂດພາສີລາວ ຕ້ອງມີເງື່ອນໄຂ ດັ່ງນີ້:

1) ຜູ້ຂົນສົ່ງສິນຄ້າ ຕ້ອງເປັນສະມາຊິກຂອງສະມາຄົມຜູ້ຂົນສົ່ງ ແລະ ຈັດສົ່ງສິນຄ້າລະຫວ່າງປະເທດ ສປປ ລາວ (LITFA) ຕາມປະເພດທີ່ໄດ້ຮັບການອະນຸມັດ ແລະ ໄດ້ເສຍຄ່າບຳລຸງສະມາຄົມຄົບຖ້ວນພາຍໃນໄຕມາດໜຶ່ງ (ສຳລັບສະມາຊິກເກົ່າ) ຫຼື ຖ້າເປັນສະມາຊິກສາມັນໃໝ່ແມ່ນພາຍຫຼັງໄດ້ຮັບການອະນຸມັດເປັນສະມາຊິກສາມັນ ແລະ ເສຍຄ່າລົງທະບຽນ ແລະ ຄ່າບຳລຸງສະມາຄົມ ຢ່າງຄົບຖ້ວນ;

2) ຜູ້ຂົນສົ່ງສິນຄ້າ ເປັນຄູ່ສັນຍາກັບບໍລິສັດຂົນສົ່ງຢູ່ຕ່າງປະເທດ ທີ່ໄດ້ຮັບອະນຸຍາດການດຳເນີນທຸລະກິດການຂົນສົ່ງຢ່າງຖືກຕ້ອງ ແລະ ມີເອກະສານຢັ້ງຢືນການເປັນຜູ້ຄ້ຳປະກັນໃຫ້ແກ່ຄູ່ສັນຍາຕາມແບບຟອມຂໍ້ຕົກລົງ LITFA ໃນລະບົບ CBTM;

3) ຜູ້ຂົນສົ່ງສິນຄ້າຮັບຜິດຊອບຄ່າໃຊ້ຈ່າຍ, ຄ່ານຳໃຊ້ລະບົບ ແລະ ຄ່າພັນທະອື່ນ ທີ່ອອກໂດຍສະມາຄົມຜູ້ຂົນສົ່ງ ແລະ ຈັດສົ່ງສິນຄ້າລະຫວ່າງປະເທດ ສປປ ລາວ (LITFA);

4) ພະນັກງານຜູ້ຂົນສົ່ງສິນຄ້າຕ້ອງໄດ້ຜ່ານການຝຶກອົບຮົມການນຳໃຊ້ລະບົບ CBTM, ຜ່ານການສອບເສັງ ແລະ ມີລະຫັດເຂົ້າລະບົບເປັນຂອງຕົວເອງ;
5) ຜູ້ຂົນສົ່ງສິນຄ້າຮັບຜິດຊອບອອກເອກະສານຂົນສົ່ງໃນນາມຜູ້ຂົນສົ່ງຕ່າງປະເທດ ແລະ ຮັບຜິດຊອບໃນການຄ້ຳປະກັນການຂົນສົ່ງພ້ອມທັງປະກັນໄພ ໃນແຕ່ລະຖ້ຽວ;
6) ຜູ້ຂົນສົ່ງສິນຄ້າບໍ່ຖືກດຳເນີນຄະດີ ຫຼື ບໍ່ຖືກສານຕັດສິນລົງໂທດ ຕັດອິດສະລະພາບ ກ່ຽວກັບການດຳເນີນທຸລະກິດການຂົນສົ່ງສິນຄ້າ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## 4. ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ທີ່ໄດ້ຮັບອະນຸຍາດຄ້ຳປະກັນລົດຂົນສົ່ງສິນຄ້າຕ່າງປະເທດ ຜ່ານເຂົ້າມາຊົ່ວຄາວໃນອານາເຂດພາສີລາວ

ຜູ້ທີ່ໄດ້ຮັບອະນຸຍາດຄ້ຳປະກັນລົດຂົນສົ່ງສິນຄ້າຕ່າງປະເທດ ຜ່ານເຂົ້າມາຊົ່ວຄາວໃນອານາເຂດພາສີລາວ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

1) ຮັບຜິດຊອບຕໍ່ໜ້າກົດໝາຍໃນການໄກ່ເກ່ຍຄະດີ ແລະ ຊຳລະສະສາງຄວາມເສຍຫາຍທາງແພ່ງ ແລະ ອາຍາແທນລົດຂົນສົ່ງຕ່າງປະເທດ ທີ່ບໍລິສັດ ຜູ້ປະກອບການ ຜູ້ຄ້ຳປະກັນ ໃນກໍລະນີມີອຸປະຕິເຫດ ຫຼື ການລະເມີດລະບຽບການຕ່າງໆ ໃນອານາເຂດພາສີລາວ ເຊັ່ນ: ຄ່າທຳນຽມ, ຄ່າປັບໃໝຢູ່ເກີນອາຍຸ ອອກນອກເສັ້ນທາງ, ນ້ຳໜັກເກີນ, ລະເມີດກົດຈະລາຈອນ ຂອງລົດບັນທຸກສິນຄ້າ, ຕູ້ບັນຈຸສິນຄ້າ ແລະ ອື່ນໆ ຕາມລະບຽບການ ຂອງ ກະຊວງການເງິນ, ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກະຊວງອື່ນທີ່ກ່ຽວຂ້ອງ ໃນແຕ່ລະໄລຍະ;
2) ຮັບຜິດຊອບ ແລະ ຮັບປະກັນ ການຊຳລະຄ່າທຳນຽມທີ່ເກີດຂຶ້ນຕາມກົດໝາຍ ແລະ ລະບຽບການກຳນົດໄວ້, ຈ່າຍທຸກຄ່າທຳນຽມ, ອາກອນຕິດພັນ (ອມພ ແລະ ອກລ ພາກບັງຄັບ ເປັນຕົ້ນ) ແລະ ຄ່າບໍລິການທີ່ກ່ຽວຂ້ອງ ໃນການ ປະຕິບັດສັນຍາ ແລະ ການບໍລິການຂອງ LITFA;
3) ຮັບປະກັນ ຄຸ້ມຄອງລົດຂົນສົ່ງສິນຄ້າໃຫ້ຢູ່ໃນເສັ້ນທາງກຳນົດ, ຈຸດຂຶ້ນ-ລົງສິນຄ້າທີ່ກຳນົດ ແລະ ການເຂົ້າ-ອອກ ຂອງພາຫະນະຕ່າງປະເທດ ໃຫ້ສອດຄ່ອງ ກັບ ຄຳແນະນຳສະບັບນີ້ຢ່າງເຂັ້ມງວດ;
4) ຖ້າຫາກສະມາຊິກຜູ້ໄດ້ຮັບມອບສິດບໍ່ສາມາດປະຕິບັດຕາມຂໍ້ກຳນົດ ແລະ ເງື່ອນໄຂດັ່ງກ່າວ, ທາງສະມາຄົມຜູ້ຂົນສົ່ງ ແລະ ຈັດສົ່ງສິນຄ້າ ລະຫວ່າງປະເທດ ຂອງ ສປປ ລາວ, ສາມາດຍົກເລີກຂໍ້ຕົກລົງໄດ້ທຸກເວລາ.

## 5. ການດຳເນີນການຄຸ້ມຄອງຕູ້ສິນຄ້າ, ນຳເຂົ້າ, ເກັບຮັກສາ ແລະ ສົ່ງອອກ

ການຄຸ້ມຄອງຕູ້ສິນຄ້າ, ນຳເຂົ້າ, ເກັບຮັກສາ ແລະ ສົ່ງອອກໃຫ້ປະຕິບັດ ດັ່ງນີ້:

1) ຕູ້ສິນຄ້າຂອງຜູ້ປະກອບການທີ່ໄດ້ລົງທະບຽນຖືກຕ້ອງມາກ່ອນແລ້ວ ແລະ ມີອາຍຸການໃຊ້ງານທີ່ນຳໃຊ້ໄດ້ຢູ່ຕາມເງື່ອນໄຂການຂົນສົ່ງສາກົນ ແມ່ນໃຫ້ປະຕິບັດຄືພາຫະນະ;
2) ຕູ້ສິນຄ້າສ່ວນຕົວ (ທີ່ບໍ່ໄດ້ລົງທະບຽນມາກ່ອນ ຫຼື ໝົດອາຍຸການໃຊ້ງານ) ແມ່ນຕ້ອງໄດ້ມາລົງທະບຽນໃນລະບົບ CBTM ກ່ອນໂດຍການໃຊ້ລະຫັດຕູ້ສະເພາະຂອງຜູ້ປະກອບການເພື່ອຕິດຕາມການເຂົ້າມາຂອງ ຕູ້ບັນຈຸສິນຄ້າ ແລະ ຕູ້ເປົ່າ ການເກັບຮັກສາ ແລະ ການນຳໃຊ້ຕູ້ບັນຈຸສິນຄ້າໂດຍຜູ້ປະກອບການຕ່າງໆໃນການເຄື່ອນໄຫວຂົນສົ່ງສິນຄ້າໃນອານາເຂດພາສີລາວ;
3) ການເກັບຮັກສາຕູ້ສິນຄ້າເປົ່າແມ່ນໃຫ້ຈັດເກັບຢູ່ໃນເຂດທ່າບົກ ຫຼື ລະບົບສາງ ທີ່ໄດ້ຮັບການອະນຸຍາດຈາກກົມຂົນສົ່ງ, ກົມພາສີ ແລະ ດຳເນີນການຄຸ້ມຄອງດ້ວຍລະບົບ CBTM;
4) ສະຖານທີ່ເກັບມ້ຽນຕູ້ທີ່ຖືກຮັບຮອງເປັນລະບົບສາງຕາມກົດໝາຍພາສີແມ່ນໃຫ້ຖືເອົາໄລຍະເວລາສູງສຸດຂອງລະບົບສາງເປັນໄລຍະເວລາສູງສຸດຂອງການເກັບຮັກສາຕູ້ (ຖ້າເກີນໃຫ້ປະຕິບັດຕາມລະບຽບການຂອງພາສີ).

**6. ການເກັບກຳຂໍ້ມູນ ແລະ ຄຸ້ມຄອງສະຖິຕິການຂົນສົ່ງ**

ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການຂົນສົ່ງເປັນຄະນະຄຸ້ມຄອງ ຖືກແຕ່ງຕັ້ງໂດຍຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການຂົນສົ່ງ, ເປັນຜູ້ຄຸ້ມຄອງການເກັບກຳຂໍ້ມູນສະຖິຕິການຂົນສົ່ງ ໂດຍມີການເກັບກຳຂໍ້ມູນກ່ຽວກັບການພັດທະນາ, ການລົງທຶນ, ການດຳເນີນທຸລະກິດ, ລວມທັງຂໍ້ມູນສະຖິຕິອື່ນທີ່ສຳຄັນ ດ້ວຍລະບົບ CBTM ເພື່ອຮັບປະກັນການລາຍງານ ຢ່າງຖືກຕ້ອງ ແລະ ທັນເວລາ.

**7. ການເກັບລາຍຮັບ**

ອະນຸຍາດໃຫ້ LITFA ເກັບຄ່າບໍລິການ ການນຳໃຊ້ລະບົບ CBTM ຕາມການອະນຸມັດຂອງ ຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການຂົນສົ່ງ ເພື່ອເປັນຄ່າ ບຳລຸງຮັກສາລະບົບ CBTM ໃຫ້ສາມາດນຳໃຊ້ ແລະ ຄຸ້ມຄອງໄດ້ຍືນຍົງ.

**8. ຜູ້ນຳໃຊ້ລະບົບ User ID**

ຜູ້ນຳໃຊ້ລະບົບ User ID ຢູ່ໃນລະບົບ CBTM ໄດ້ກຳນົດການຄຸ້ມຄອງ ໄວ້ 03 ລະດັບ ດັ່ງນີ້:

1) User ID ຂອງກອງເລຂາຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການຂົນສົ່ງ;
2) User ID ຂອງດ່ານສາກົນ;
3) User ID ຂອງຜູ້ປະກອບການ.

**9. ການຈັດຕັ້ງປະຕິບັດ ແລະ ຜົນສັກສິດ**

ມອບໃຫ້ ກົມຂົນສົ່ງ ກະຊວງໂຍທາທິການ ແລະ ຂົນສົ່ງ, ກອງເລຂາຄະນະອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການຂົນສົ່ງ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເຜີຍແຜ່, ເຊື່ອມຊຶມ, ແນະນຳ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ໃຫ້ມີປະສິດທິຜົນ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຢ່າງເຂັ້ມງວດ.

ຄຳແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ.

**ລັດຖະມົນຕີ**

ກະຊວງໂຍທາທິການ ... ລັດຖະມົນຕີ

ວຽງສະຫວັດ ສີພັນດອນ

ເອກະສານຊ້ອນທ້າຍ

# ຄູ່ມືການນຳໃຊ້ລະບົບ CBTM

## I. ໃບຂົນສົ່ງລວມສິນຄ້າ

1. ໃບຂົນສົ່ງລວມສິນຄ້າ ຂາເຂົ້າ Inward Cargo Manifest (ໃບ ICM) ແມ່ນ ເອກະສານໃຊ້ສຳລັບການ ຢັ້ງຢືນການມອບຮັບສິນຄ້າລະຫວ່າງຜູ້ຂົນສົ່ງ ແລະ ຜູ້ຮັບສິນຄ້າປາຍທາງ;
2. ໃບຂົນສົ່ງລວມສິນຄ້າ ຂາອອກ Outward Cargo Manifest (ໃບ OCM) ແມ່ນ ເອກະສານໃຊ້ສຳລັບການ ຢັ້ງຢືນການມອບຮັບສິນຄ້າລະຫວ່າງຜູ້ຂົນສົ່ງ ແລະ ຜູ້ ບໍລິການສາງດ່ານພາສີ ສາກົນ ຂາອອກ;
3. ໃບຂົນສົ່ງລວມສິນຄ້າຜ່ານແດນສາກົນ Transit Cargo Manifest (ໃບ TCM) ແມ່ນ ເອກະສານໃຊ້ສຳລັບການຢັ້ງຢືນການມອບຮັບສິນຄ້າລະຫວ່າງຜູ້ຂົນສົ່ງ ແລະ ຜູ້ປະກອບການສາງສິນຄ້າ ຢູ່ດ່ານຕົ້ນທາງບ່ອນມາຮອດຂອງສິນຄ້າ ລໍຖ້າການຄ່ຽນຖ່າຍພາຫະນະ ເພື່ອສົ່ງຕໍ່ໄປຍັງດ່ານປາຍທາງຂາອອກ.

## II. ຂັ້ນຕອນການປະຕິບັດ

### 1. ຂັ້ນຕອນການນຳເຂົ້າຕູ້ບັນຈຸສິນຄ້າຕ່າງປະເທດ

1) ຜູ້ປະກອບການເຂົ້າຂໍ້ມູນໃນລະບົບ CBTM ໂດຍເລືອກໃຊ້ເມນູ TAD - Container Control ແລະ ເລືອກສະຖານທີ່ເກັບຮັກສາຕູ້ທີ່ຈະເອົາຕູ້ສິນຄ້າໄປເກັບຮັກສາໄວ້ ຕາມກົດໝາຍ ແລະ ລະບຽບການກຳນົດໄວ້ໃນກົດໝາຍວ່າດ້ວຍພາສີ, ສະບັບເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020 ມາດຕາ 72 ຫາ ມາດຕາ 77 (ໃນກໍລະນີຈະບໍ່ໄດ້ສົ່ງຕູ້ເປົ່າກັບຫຼັງຈາກສົ່ງສິນຄ້າແລ້ວ);
2) ຕ້ອງຊຳລະຄ່ານຳໃຊ້ແບບຟອມໃບອະນຸຍາດຜ່ານຊົ່ວຄາວຕູ້ບັນຈຸສິນຄ້າຕາມແບບຟອມໃບບິນ ແລະ ຫຼື ຜ່ານລະບົບອີເລັກໂຕຣນິກຂອງທະນາຄານ;
3) ເວລາຕູ້ສິນຄ້າເຂົ້າ, ເຈົ້າໜ້າທີ່ຂອງສະມາຄົມຜູ້ຂົນສົ່ງ ແລະ ຈັດສົ່ງສິນຄ້າລະຫວ່າງປະເທດ ສປປ ລາວ (LITFA) ຫຼື ຜູ້ໄດ້ຮັບມອບອຳນາດຈາກ LITFA ປະຈຳດ່ານ, ເປັນຜູ້ອັບເດດລະບົບ Manifest Gate In ເພື່ອຢືນຢັນການມາຮອດຂອງຕູ້ບັນຈຸສິນຄ້າເຕັມ, ແລະ ອັບເດດລະບົບ Container Gate In ເພື່ອ ຢືນຢັນການມາຮອດຂອງຕູ້ເປົ່າ.

### 2. ຂັ້ນຕອນການເກັບຮັກສາຕູ້ບັນຈຸສິນຄ້າຕ່າງປະເທດ

1) ພາຍຫຼັງຕູ້ສິນຄ້າເຂົ້າມາຢູ່ໃນ ສປປ ລາວແລ້ວ, ຕູ້ບັນຈຸສິນຄ້າເປົ່າທີ່ຕ້ອງການເກັບຮັກສາໄວ້ຢູ່ ສປປ ລາວ ເພື່ອລໍຖ້າບັນຈຸສິນຄ້າເພື່ອສົ່ງອອກນອກປະເທດ, ແມ່ນຕ້ອງໄດ້ນຳໄປເກັບຮັກສາໄວ້ຢູ່ທ່າບົກ ຫຼື ລະບົບສາງຕ່າງໆ ທີ່ທາງລັດຖະການພາສີ ແລະ ຍທຂ ກຳນົດໄວ້ຕາມກົດໝາຍ ແລະ ລະບຽບການກຳນົດ;
2) ຜູ້ປະກອບການຂົນສົ່ງເຂົ້າໄປອັບເດດລະບົບ TAD - Container Control ເພື່ອສົ່ງຕູ້ບັນຈຸສິນຄ້າເປົ່າເຂົ້າ ສະຖານທີ່ເກັບຮັກສາຕູ້ ແລະ ພ້ອມທັງມອບສະຕິກເກີ ບ53 ໃຫ້ເຈົ້າໜ້າທີ່ພາສີປະຈຳການຢູ່ສະຖານທີ່ສາງສິນຄ້າເກັບຮັກສາຕູ້ ເຊັນຮັບເອົາຕູ້ສິນຄ້າໃສ່ໃບອະນຸຍາດຜ່ານຊົ່ວຄາວຕູ້ບັນຈຸສິນຄ້າເພື່ອເປັນຫຼັກຖານການມອບສົ່ງຕູ້ສິນຄ້າ ແລະ ສະຕິກເກີ ບ53;

3) ພາຍຫຼັງມອບສົ່ງຕູ້ສິນຄ້າ ແລະ ສະຕິກເກີ ບ53 ໃຫ້ສະຖານທີ່ເກັບຮັກສາຕູ້ແລ້ວ, ຄວາມຮັບຜິດຊອບໃນການຕໍ່ອາຍຸ ບ53 ຂອງຕູ້ບັນຈຸສິນຄ້າດັ່ງກ່າວ ແມ່ນຈະຕົກເປັນຂອງຜູ້ປະກອບການສະຖານທີ່ເກັບຮັກສາຕູ້ສິນຄ້າທີ່ຮັບຜິດຊອບ. ຖ້າຫາກຕູ້ຫາກຕ້ອງການຢູ່ເກີນເວລາກຳນົດ, ຕ້ອງໄດ້ຂໍຕໍ່ອາຍຸການນຳໃຊ້ຕູ້ບັນຈຸສິນຄ້ານຳເຈົ້າໜ້າທີ່ພາສີ ບ່ອນໃກ້ທີ່ສຸດທີ່ຮັບຜິດຊອບ, ຖ້າມີການລະເມີດ, ແມ່ນຜູ້ປະກອບການສະຖານທີ່ເກັບຮັກສາຕູ້ ຕ້ອງໄດ້ຮັບຜິດຊອບຕໍ່ຄ່າປັບໃໝຕ່າງໆທີ່ເກີດຂຶ້ນ ໂດຍບໍ່ໃຫ້ມີຜົນສະທ້ອນຕໍ່ຜູ້ປະກອບການຂົນສົ່ງທີ່ນຳເຂົ້າຕູ້ໃນເບື້ອງຕົ້ນ.

**3. ຂັ້ນຕອນການສົ່ງອອກຕູ້ບັນຈຸສິນຄ້າຕ່າງປະເທດ**

1) ຜູ້ປະກອບການເຂົ້າຂໍ້ມູນໃນລະບົບ CBTM ໂດຍເລືອກໃຊ້ເມນູ TAD - Container Control ແລະ ເລືອກຕູ້ບັນຈຸສິນຄ້າທີ່ຢູ່ສະຖານທີ່ເກັບຮັກສາຕູ້ເພື່ອສ້າງ ໃບອະນຸຍາດຜ່ານຊົ່ວຄາວຕູ້ສິນຄ້າ;
2) ຕ້ອງຊຳລະຄ່າໃຊ້ແບບຟອມໃບອະນຸຍາດຜ່ານຊົ່ວຄາວຕູ້ບັນຈຸສິນຄ້າຕາມແບບຟອມໃນແຕ່ລະຄັ້ງ;
3) ຮັບຕູ້ບັນຈຸສິນຄ້າຈາກ ສະຖານທີ່ເກັບຮັກສາຕູ້ ພ້ອມດ້ວຍເຊັນຮັບຕູ້ ແລະ ສະຕິກເກີ ບ53 ເວລາຕູ້ສິນຄ້າຮອດດ່ານປາຍທາງ, ເຈົ້າໜ້າທີ່ເຈົ້າໜ້າທີ່ຂອງສະມາຄົມຜູ້ຂົນສົ່ງ ແລະ ຈັດສົ່ງສິນຄ້າລະຫວ່າງປະເທດ ສປປ ລາວ (LITFA) ປະຈຳດ່ານ ອັບເດດລະບົບ Manifest Gate Out ເພື່ອຢືນຢັນການອອກໄປຂອງຕູ້ສິນຄ້າ;
4) ໃນກໍລະນີສົ່ງອອກຕູ້ບັນຈຸສິນຄ້າເປົ່າ, ແມ່ນໃຫ້ອັບເດດລະບົບ Container Gate Out ເພື່ອຢືນຢັນການອອກໄປຂອງຕູ້ເປົ່າ.

**4. ຂັ້ນຕອນການຜ່ານແດນ ແລະ ນຳເຂົ້າເພື່ອສົ່ງອອກຕູ້ບັນຈຸສິນຄ້າຕ່າງປະເທດ**

1) ສຳລັບການຜ່ານແດນ ແລະ ນຳເຂົ້າເພື່ອສົ່ງອອກຕູ້ບັນຈຸສິນຄ້າ ແມ່ນໃຫ້ເລືອກດ່ານເຂົ້າ ແລະອອກໃນເວລາສ້າງເອກະສານໃບອະນຸຍາດຜ່ານຊົ່ວຄາວຕູ້ບັນຈຸສິນຄ້າໃນລະບົບ CBTM;
2) ເວລາສົ່ງອອກຕູ້ບັນຈຸສິນຄ້າຢູ່ດ່ານປາຍທາງ ແມ່ນໃຫ້ນຳໃຊ້ສະຕິກເກີ ບ53 ເພື່ອອັບເດດລະບົບ ບ53 ຂອງພາສີ ແລະ ເຈົ້າໜ້າທີ່ LITFA ປະຈຳດ່ານ ອັບເດດລະບົບ Manifest Gate Out ເພື່ອຢືນຍັນການອອກໄປຂອງຕູ້ສິນຄ້າຜ່ານແດນ.

**5. ຂັ້ນຕອນການສົ່ງອອກຕູ້ບັນຈຸສິນຄ້າພາຍໃນ**

1) ຜູ້ປະກອບການເຂົ້າຂໍ້ມູນໃນລະບົບ CBTM ໂດຍເລືອກໃຊ້ເມນູ TAD - Container Control ແລະ ເລືອກຕູ້ບັນຈຸສິນຄ້າທີ່ຢູ່ສະຖານທີ່ເກັບຮັກສາຕູ້ເພື່ອສ້າງ ໃບອະນຸຍາດຜ່ານຊົ່ວຄາວຕູ້ສິນຄ້າ;
2) ຮັບຕູ້ບັນຈຸສິນຄ້າຈາກ ສະຖານທີ່ເກັບຮັກສາຕູ້ ພ້ອມດ້ວຍເຊັນຮັບຕູ້ ຈາກເຈົ້າຂອງຕູ້ ຫຼື ຕົວແທນ ເວລາຕູ້ສິນຄ້າຮອດດ່ານປາຍທາງ, ເຈົ້າໜ້າທີ່ຂອງສະມາຄົມຜູ້ຂົນສົ່ງ ແລະ ຈັດສົ່ງສິນຄ້າລະຫວ່າງປະເທດ ສປປ ລາວ (LITFA) ປະຈຳດ່ານ ອັບເດດລະບົບ Manifest Gate Out ເພື່ອຢືນຍັນການອອກໄປຂອງຕູ້ສິນຄ້າ;
3) ໃນກໍລະນີສົ່ງອອກຕູ້ບັນຈຸສິນຄ້າເປົ່າ ແມ່ນໃຫ້ອັບເດດລະບົບ Container Gate Out ເພື່ອຢືນຍັນ ການອອກໄປຂອງຕູ້ເປົ່າ.

## 6. ຂັ້ນຕອນການເກັບຮັກສາຕູ້ບັນຈຸສິນຄ້າພາຍໃນ

ຕູ້ບັນຈຸສິນຄ້າພາຍໃນສາມາດເກັບຮັກສາຕູ້ໄວ້ຢູ່ ລະບົບສາງຕ່າງໆ ທີ່ທາງລັດຖະການພາສີກຳນົດໄວ້ຕາມກົດໝາຍ ແລະ ລະບຽບການກຳນົດ ຫຼື ເຈົ້າຂອງຕູ້ເປັນຜູ້ກຳນົດ ໂດຍບໍ່ກຳນົດເວລາໃນການເກັບມ້ຽນ.

## 7. ຂັ້ນຕອນການນຳເຂົ້າຕູ້ບັນຈຸສິນຄ້າພາຍໃນ

1) ຜູ້ປະກອບການເຂົ້າຂໍ້ມູນໃນລະບົບ CBTM ໂດຍເລືອກໃຊ້ເມນູ TAD - Container Control ແລະ ເລືອກຕູ້ບັນຈຸສິນຄ້າເພື່ອສ້າງ ໃບອະນຸຍາດຜ່ານຊົ່ວຄາວຕູ້ສິນຄ້າ;
2) ຮັບຕູ້ບັນຈຸສິນຄ້າຈາກ ສະຖານທີ່ເກັບຮັກສາຕູ້ ພ້ອມດ້ວຍເຊັນຮັບຕູ້ກັບເຈົ້າຂອງຕູ້ສິນຄ້າ ຫຼື ຕົວແທນອັບເດດລະບົບ Manifest Gate In ເພື່ອຢືນການເຂົ້າມາຂອງຕູ້ບັນຈຸສິນຄ້າ;
3) ໃນກໍລະນີນຳເຂົ້າຄືນຕູ້ບັນຈຸສິນຄ້າເປົ່າ, ແມ່ນໃຫ້ອັບເດດລະບົບ Container Gate In ເພື່ອຢືນຢັນການເຂົ້າມາຂອງຕູ້ເປົ່າ.

# III. ຂັ້ນຕອນການດຳເນີນການນຳເຂົ້າ, ຜ່ານແດນ ແລະ ສົ່ງອອກສິນຄ້າ

## 1. ຂັ້ນຕອນການດຳເນີນການນຳເຂົ້າສິນຄ້າ

1) ຫຼັງຈາກໄດ້ຮັບລາຍລະອຽດສິນຄ້າແລ້ວ ຜູ້ຂົນສົ່ງ ຫຼື ຕົວແທນຕ້ອງໄດ້ກວດກາຄວາມຖືກຕ້ອງຂອງສິນຄ້າ ແລະ ສ້າງ ໃບຂົນສົ່ງລວມຂາເຂົ້າ / ໃບ ICM;
2) ຜູ້ຂົນສົ່ງຕ້ອງໄດ້ຍື່ນ ໃບ ICM ໃຫ້ເຈົ້າໜ້າທີ່ດ່ານສາກົນບ່ອນມາຮອດຂອງສິນຄ້າເພື່ອກວດທຽບສິນຄ້າຢູ່ໃນລົດ ກັບເອກະສານຂົນສົ່ງສິນຄ້າ ຖ້າຖືກຕ້ອງແມ່ນຄະນະຄຸ້ມຄອງດ່ານ ຫຼື ຜູ້ໄດ້ຮັບມອບອຳນາດ ເຊັນຮັບຢັ້ງຢືນການກວດກາການຂົນສົ່ງໃສ່ ໃບ ICM ແລະ ສົ່ງຄືນຄົນລົດເພື່ອດຳເນີນການຂັ້ນຕໍ່ໄປ.

## 2. ຂັ້ນຕອນການດຳເນີນການຜ່ານແດນສິນຄ້າ

1) ຫຼັງຈາກໄດ້ຮັບລາຍລະອຽດສິນຄ້າ ຜູ້ຂົນສົ່ງ ຫຼື ຕົວແທນທີ່ໄດ້ຮັບການມອບໝາຍຕ້ອງໄດ້ຢືນຢັນຄວາມຖືກຕ້ອງຂອງສິນຄ້າ ແລະ ຜູ້ຄ້ຳປະກັນຢູ່ ສປປ ລາວ (Notify Party) ແລະ ສ້າງ ໃບຂົນສົ່ງລວມຜ່ານແດນ (ຂາເຂົ້າ) / ໃບ TCM (ຂາເຂົ້າ);
2) ຜູ້ຂົນສົ່ງຕ້ອງໄດ້ຍື່ນໃບ TCM (ຂາເຂົ້າ) ໃຫ້ເຈົ້າໜ້າທີ່ດ່ານສາກົນບ່ອນມາຮອດຂອງສິນຄ້າເພື່ອກວດທຽບສິນຄ້າຢູ່ໃນລົດ ກັບເອກະສານຂົນສົ່ງສິນຄ້າ ຖ້າຖືກຕ້ອງແມ່ນຄະນະຄຸ້ມຄອງດ່ານ ຫຼື ຜູ້ໄດ້ຮັບມອບອຳນາດ ເຊັນຮັບຢັ້ງຢືນການກວດກາການຂົນສົ່ງໃສ່ໃບ TCM (ຂາເຂົ້າ) ແລະ ສົ່ງຄືນຄົນລົດເພື່ອດ[illegible]ເນີນການຂັ້ນຕໍ່ໄປ.
3) ຕົວແທນ ທີ່ໄດ້ຮັບມອບອຳນາດໃນ ສປປ ລາວ (Notify Party) Submit ຂໍ້ມູນດັ່ງກ່າວຫາເຈົ້າໜ້າທີ່ດ່ານພາສີຊາຍແດນ ຫຼື ດ່ານສາກົນສິນຄ້າທ່າບົກ ເຊິ່ງເປັນຈຸດຄ່ຽນຖ່າຍຮູບແບບການຂົນສົ່ງສິນຄ້າດັ່ງກ່າວເພື່ອດຳເນີນການລະບຽບການທາງພາສີໃນຂັ້ນຕໍ່ໄປ;
4) ຫຼັງຈາກ ຜູ້ຄ້ຳປະກັນ ຫຼື ຕົວແທນຢູ່ ສປປ ລາວ ສຳເລັດການແຈ້ງພາສີສຳລັບສິນຄ້າຜ່ານແດນແລ້ວ, ຕ້ອງໄດ້ເຂົ້າຂໍ້ມູນພາຫະນະຂົນສົ່ງທີ່ຈະມາດຳເນີນການຂົນສົ່ງອອກຈາກ ສປປ ລາວ ໄປອອກດ່ານປາຍທາງທີ່ກຳນົດ;

5) ຜູ້ຄວບຄຸມພາຫະນະຂົນສົ່ງ (ຂອງຂໍ້ 1) ຫຼື ຕົວແທນ) ຕ້ອງໄດ້ແຈ້ງໃບ TCM (ຂາອອກ) ໃຫ້ຜູ້ບໍລິການລະບົບສາງພາສີ ຫຼື ທ່າບົກຢູ່ດ່ານຊາຍແດນ ເພື່ອຢືນຢັນສິດໃນການຮັບສິນຄ້າຈາກ ຜູ້ຄໍ້າປະກັນຢູ່ ສປປ ລາວ (Notify Party);

6) ຜູ້ບໍລິການລະບົບສາງພາສີ ຫຼື ທ່າບົກຢູ່ດ່ານຊາຍແດນ ດຳເນີນການຂົນສິນຄ້າໃສ່ພາຫະນະຂົນສົ່ງໃຫ້ຜູ້ຂົນສົ່ງ ຫຼື ຕົວແທນ ຕາມລາຍລະອຽດໃນໃບ TCM (ຂາອອກ);

7) ຜູ້ຂົນສົ່ງ ຫຼື ຕົວແທນ ເຊັນຮັບສິນຄ້າກັບຜູ້ບໍລິການລະບົບສາງພາສີ ຫຼື ທ່າບົກຢູ່ດ່ານຊາຍແດນ ໃສ່ໃບ TCM (ຂາອອກ) ແລະ ນຳໃຊ້ເອກະສານດັ່ງກ່າວເພື່ອປະກອບໃນການອອກໃບປ່ອຍ ແລະ ໃບເກັບເງິນກັບຜູ້ຄ້ຳປະກັນຢູ່ ສປປ ລາວ.

### 3. ຂັ້ນຕອນການດຳເນີນການສົ່ງອອກສິນຄ້າ

ຫຼັງຈາກໄດ້ຮັບລາຍລະອຽດສິນຄ້າ ຜູ້ຂົນສົ່ງຕ້ອງໄດ້ຢືນຢັນຄວາມຖືກຕ້ອງ ແລະ ສ້າງໃບຂົນສົ່ງລວມຂາອອກ/ໃບ OCM ໂດຍກຳນົດສະຖານີຕົ້ນທາງການຂົນສົ່ງ ແລະ ດ່ານທີ່ເປັນຈຸດອອກໄປຂອງສິນຄ້າໃສ່ໃບ OCM ເພື່ອຕິດຕາມການເຄື່ອນຍ້າຍພາຍໃນລະຫວ່າງທາງ ແລະ ໃຊ້ເປັນພື້ນຖານໃນການເກັບກຳສະຖິຕິໃຫ້ແກ່ພາກລັດ.

## IV. ຂັ້ນຕອນການດຳເນີນການສັ່ງມອບສິນຄ້າ

1. ຜູ້ປະກອບການຂົນສົ່ງ ຫຼື ຜູ້ແຈ້ງຮັບສິນຄ້າໃນເອກະສານຂົນສົ່ງຈາກປະເທດຕົ້ນທາງ (Notify Party) ເປັນຜູ້ສ້າງ ແລະ ລະບຸ ຜູ້ແຈ້ງພາສີທົ່ວໄປ ຫຼື ຜູ້ບໍລິການແຈ້ງພາສີທີ່ໄດ້ຮັບມອບອຳນາດຈາກເຈົ້າຂອງສິນຄ້າ ເປັນຜູ້ຮັບຊ່ວງຕໍ່;
2. ຜູ້ແຈ້ງພາສີທົ່ວໄປ ຫຼື ຜູ້ບໍລິການແຈ້ງພາສີ ທີ່ໄດ້ຮັບມອບອຳນາດຈາກເຈົ້າຂອງສິນຄ້າ ກົດຮັບໃນລະບົບ CBTM (ຢູ່ Inbox);
3. ຜູ້ແຈ້ງພາສີທົ່ວໄປ ຫຼື ຜູ້ບໍລິການແຈ້ງພາສີ ນຳໃຊ້ໃບສັ່ງມອບສິນຄ້າທີ່ພິມອອກຈາກລະບົບ CBTM ເພື່ອປະກອບເອກະສານແຈ້ງພາສີເປັນລາຍລະອຽດ ຕາມຂັ້ນຕອນໃນຂັ້ນຕໍ່ໄປ;
4. ເຈົ້າໜ້າທີ່ປະຈຳດ່ານສາກົນສິນຄ້າທ່າບົກ, ດ່ານຊາຍແດນສາກົນ ຫຼື ລະບົບສາງ ຕ້ອງປ່ອຍສິນຄ້າໃຫ້ແກ່ຜູ້ປະກອບການທີ່ລະບຸໃນໃບສັ່ງມອບສິນຄ້າ ແລະ ມີຂໍ້ມູນໃນລະບົບເທົ່ານັ້ນ. ໃນກໍລະນີທີ່ຜູ້ປະກອບການທີ່ລະບຸໃນໃບສັ່ງມອບສິນຄ້າບໍ່ສາມາດມາຮັບມອບສິນຄ້າດ້ວຍຕົນເອງ ໃຫ້ສັ່ງມອບສິນຄ້າຕໍ່ໃຫ້ຜູ້ໄດ້ຮັບສິດຜ່ານລະບົບ CBTM.